DVV International

Education for Everyone. Worldwide. Lifelong.

# ເງື່ອນໄຂ (ToR)

## ຊ່ຽວຊານດ້ານການສ້າງຄູ່ມືສ້າງຄວາມເຂັ້ມແຂງແກ່ແມ່ຍິງໃນຊຸມຊົນ

**ປະຫວັດຄວາມເປັນມາ**

ຫ້ອງການ ດີວີວີ ອິນເຕີເນັດເຊີແນວ (DVV International) ແມ່ນສະມາຄົມເພື່ອການສຶກສາຜູ້ໃຫ່ຍຂອງເຢຍລະມັນ, ເຊິ່ງເຮັດໜ້າທີ່ສົ່ງເສີມວຽກງານການສຶກສາຜູ້ໃຫ່ຍ ແລະ ການຮຽນຮູ້ຕະຫຼອດຊີວິດໃນ ສປປລາວ ເລີ່ມແຕ່ປີ 2009 ເປັນຕົ້ນມາ, ສ່ວນຫຼາຍແມ່ນສົ່ງເສີມວຽກງານການສຶກສານອກໂຮງຮຽນ. ໂດຍສະເພາະແມ່ນ ກົມການສຶກສານອກໂຮງຮຽນ.

ໃນໄລຍະປີ 2021-2023 ນີ້, ຫ້ອງການດີວີວີ ອິນເຕີເນັດເຊີແນວມີຈຸດປະສົງໃນການພັດທະນາຄູ່ມືການສ້າງຄວາມເຂັ້ມ ແຂງໃຫ້ແກ່ພະນັກງານການສຶກສານອກໂຮງຮຽນໃນການຈັດຕັ້ງປະຕິບັດກິດຈະກຳຢູ່ໃນຊຸມຊົນ. ທາງໂຄງການມີຄວາມຕ້ອງການທີ່ປຶກສາໃນການສ້າງຫຼັກສູດທີ່ກວມເອົາເນື້ອໃນດັ່ງລຸ່ມນີ້:

- ທັກສະທາງສັງຄົມ
- ການນຳໃຊ້ເຄື່ອງມືໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ
- ການສ້າງທຸລະກິດຂະໜາດນ້ອຍໃຫ້ແກ່ແມ່ຍິງໃນຊຸມຊົນ

**ຈຸດປະສົງ:**

- ຄູ່ຮ່ວມສັນຍາຈະຕ້ອງດຳເນີນການທົບທວນຄູ່ມືທີ່ໄດ້ພັດທະນາມາແລ້ວ ແລະ ໃຫ້ຄຳປຶກສາແບບມີສ່ວນຮ່ວມ.
- ພ້ອມໃຫ້ຄຳແນະນຳໃນການປັບປຸງປຶ້ມຄູ່ມືທາງດ້ານເນື້ອໃນຂອງຄູ່ມື ແລະວິທີການໃນການດຳເນີນການຝຶກອົບຮົມ.
- ໃຫ້ຄຳແນະນຳເພີ່ມເຕີມ ໂດຍອີງໃສ່ຄວາມເໝາະສົມສຳລັບກຸ່ມເປົ້າໝາຍ

**ວິທີການ:**

- ທົບທວນເນື້ອໃນຄູ່ມື ພ້ອມໃຫ້ຄຳປຶກສາ ໃນການພັດທະນາຄູ່ມືສະບັບຮ່າງໃຫ້ສຳເລັດໃນທ້າຍເດືອນທັນວາ 2021
- ສຳລັບສະບັບສົມບູນແມ່ນໃຫ້ສຳເລັດໃນທ້າຍເດືອນມັງກອນ 2022
- ຄູ່ຮ່ວມສັນຍາຈະຕ້ອງສົ່ງແຜນການປະຕິບັດງານເປັນຈຳນວນມື້ໃຫ້ແກ່ຜູ້ປະສານງານ

**ເກນການຄັດເລືອກ:**

ຄູ່ຮ່ວມສັນຍາຈະຖືກເລືອກຕາມເກນຕ່າງໆດັ່ງລຸ່ມນີ້:

- ປະສົບການໃນການເປັນຄູຝຶກມາກ່ອນ
- ປະສົບການໃນການເຮັດວຽກໃນຊຸມຊົນ
- ປະສົບການໃນການເຮັດວຽກສ້າງຄວາມເຂັ້ມແຂງແກ່ແມ່ຍິງໃນຊຸມຊົນ
- ເຄີຍມີປະສົບການໃນການສ້າງຫຼັກສູດຍິ່ງເປັນການດີ

ເອກະສານຂອງຜູ້ສະໝັກປະກອບມີຮ່າງວິທີການວິໄຈ, CV ກ່ຽວກັບຄວາມຊຳນານ ແລະ ງົບປະມານທີ່ສະເໜີ ແລ້ວສົ່ງໄປຫາຜູ້ບໍລິຫານໂຄງການຂອງ DVV International, ທ່ານນາງ ເບຄຳ ສະເຫຼີມສຸກ ຜ່ານທາງເມວ (saleumsouk@dvv-international.la) ຫຼື beykhams@gmail.com ເບີໂທ 02055517978 ກ່ອນວັນທີ 22 ພະຈິກ 2021. ສາມາດສົ່ງຄຳຖາມເພື່ອຄວາມກະຈ່າງແຈ້ງໄດ້ຮອດວັນທີ 20 ພະຈິກ2021.